26.9.08

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ — ເລກທີ 96 /ນຍ

ນະຄອນຫລວງວຽງຈັນ, ວັນທີ 23.09.2008

ກະຊວງອຸດສາຫະກຳແລະການຄ້າ
ຂາເຂົ້າ ເລກທີ: 2180
ວັນທີ: 29.9.08

ກະຊວງອຸດສາຫະກຳແລະການຄ້າ
ກົມການຄ້າພາຍໃນ
ຂາເຂົ້າ ເລກທີ: 1979
ວັນທີ: 01.10.08

# ຂໍ້ຕົກລົງ
## ຂອງນາຍົກລັດຖະມົນຕີ
## ວ່າດ້ວຍການສ້າງຄັງແຮເຂົ້າແຫ່ງຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003.
- ອີງຕາມມະຕິຂອງກອງປະຊຸມລັດຖະບານ ຄັ້ງວັນທີ 29 - 31 ກໍລະກົດ 2008.
- ເພື່ອຮັບປະກັນຄວາມປອດໄພດ້ານສະບຽງອາຫານ ແລະ ເພື່ອດັດສົມລາຄາເຂົ້າບໍ່ໃຫ້ເກີດການປັ່ນປ່ວນຮ້າຍແຮງ.

## ນາຍົກລັດຖະມົນຕີ ຕົກລົງ :

ມາດຕາ 01 : ສ້າງຄັງແຮເຂົ້າແຫ່ງຊາດ ຊຶ່ງປະກອບດ້ວຍ :
- ຄັງແຮເຂົ້າຂອງລັດຖະບານ.
- ຄັງແຮເຂົ້າຂອງຜູ້ປະກອບການໂຮງສີ ແລະ ຫົວໜ່ວຍທຸລະກິດ ຊື້ - ຂາຍ ເຂົ້າ.
- ຄັງແຮເຂົ້າຂອງປະຊາຊົນ.

ມາດຕາ 02 : ປະລິມານຄັງແຮເຂົ້າແຫ່ງຊາດ ລວມທັງໝົດແມ່ນ 65.000 ໂຕນ, ໂດຍແຍກອອກດັ່ງນີ້:

2.1- ຄັງແຮເຂົ້າຂອງລັດຖະບານ 30.000 ໂຕນເຂົ້າສານ ( ບໍ່ລວມເອົາຄັງແຮເຂົ້າສຳລັບກຳລັງປະກອບອາວຸດ ປກຊ - ປກສ ).

2.2- ຄັງແຮເຂົ້າຂອງຜູ້ປະກອບການ ໂຮງສີເຂົ້າ ແລະ ຫົວໜ່ວຍທຸລະກິດ ຊື້-ຂາຍເຂົ້າ ຂອງເອກະຊົນ ແລະ ຂອງປະຊາຊົນ ລວມກັນ 30.000 ໂຕນເຂົ້າສານ.

2.3- ຄັງແຮແນວພັນເຂົ້າ 5.000 ໂຕນ.

ມາດຕາ 03 : ຄັງແຮເຂົ້າຂອງລັດຖະບານ ປະກອບດ້ວຍ (1) ຄັງແຮສຳລັບການສົງເຄາະຊ່ວຍເຫລືອ ຫລືແກ້ໄຂຄວາມຕ້ອງການໃນກໍລະນີສຸກເສີນຈຳເປັນຮີບດ່ວນ ອັນເນື່ອງມາຈາກການເກີດໄພພິບັດ ຫລື ເຫດສຸດວິໄສຕ່າງໆ (2) ຄັງແຮສຳລັບໃຊ້ແຊກແຊງຕະຫລາດ ແລະ ດັດສົມລາຄາ ໃນກໍລະນີເກີດສະພາບຂາດແຄນເຂົ້າຍ້ອນສາເຫດຕ່າງໆ ຫລືໃນກໍລະນີມີ

ການກັກຕຸນ-ປັ່ນປ່ວນລາຄາ ຊຶ່ງອາດກໍ່ໃຫ້ເກີດຜົນກະທົບຕໍ່ການຄອງຊີບ ແລະ ສະຖຽນລະພາບທາງສັງຄົມ.

ມາດຕາ 04 : ໃຫ້ປະຕິບັດຫລັກການຄຸ້ມຄອງຄັງແຮເຂົ້າຂອງລັດຖະບານ ດັ່ງນີ້ :

- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຄຸ້ມຄອງ ແລະ ຄົ້ນຄວ້ານຳສະເໜີກ່ຽວກັບການນຳໃຊ້ຄັງແຮເຂົ້າ ສຳລັບການສົງເຄາະຊ່ວຍເຫລືອ ແລະ ແກ້ໄຂບັນຫາສຸກເສີນ; ສ່ວນການຕົກລົງອະນຸມັດໃຫ້ນຳໃຊ້ນັ້ນ ແມ່ນຂຶ້ນກັບລັດຖະບານ.
- ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງນຳໃຊ້ຄັງແຮເຂົ້າ ສຳລັບແຊກແຊງຕະຫລາດ-ດັດສົມລາຄາເຂົ້າ.
- ກະຊວງກະສິກຳ-ປ່າໄມ້ ເປັນຜູ້ຄຸ້ມຄອງຄັງແຮແນວພັນເຂົ້າ ຂອງລັດຖະບານ.

ມາດຕາ 05 : ສຳລັບສົກປີ 2008-2009 ໃຫ້ສ້າງຄັງແຮເຂົ້າຂອງລັດຖະບານ ໃນຈຳນວນ 10.000 ໂຕນເຂົ້າສານ ໂດຍແຍກ ດັ່ງນີ້ :

5.1 - ຄັງແຮເຂົ້າສຳລັບການສົງເຄາະຊ່ວຍເຫລືອແກ້ໄຂກໍລະນີສຸກເສີນ ແລະ ຈຳເປັນຮີບດ່ວນ ຈຳນວນ 2.000 (ສອງພັນ) ໂຕນ.

5.2 - ຄັງແຮເຂົ້າສຳລັບດັດສົມຕະຫລາດ ເພື່ອຮັບປະກັນສະຖຽນລະພາບດ້ານລາຄາ ແລະ ຄວາມປອດໄພດ້ານສະບຽງອາຫານ ຈຳນວນ 8.000 (ແປດພັນ) ໂຕນ.

ມາດຕາ 06 : ເພື່ອຈັດຊື້ເຂົ້າເປັນຄັງແຮ ສຳລັບການສົງເຄາະຊ່ວຍເຫລືອ ຫລື ແກ້ໄຂຄວາມຕ້ອງການໃນກໍລະນີສຸກເສີນຈຳນວນສອງພັນໂຕນນັ້ນ ໃຫ້ປະຕິບັດດັ່ງນີ້ :

6.1 - ໃຫ້ນຳໃຊ້ເງິນສະສົມຂອງລັດຖະບານ ແລະ ເງິນຈາກການຂາຍເຂົ້າຊ່ວຍເຫລືອ KR-I ໂດຍມອບໃຫ້ກະຊວງການເງິນ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັນ ດຳເນີນການກວດກາ ແລະ ຄິດໄລ່ຈຳນວນເງິນທີ່ຕ້ອງການ ແລ້ວນຳສະເໜີນາຍົກລັດຖະມົນຕີ ອະນຸມັດເພື່ອຈັດຊື້ເຂົ້າຈຳນວນດັ່ງກ່າວ.

6.2 - ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບຊີ້ນຳ ການຈັດຊື້ເຂົ້າຕາມຈຳນວນ ແລະ ຕາມມາດຕະຖານຄຸນນະພາບສຳລັບຄັງແຮສຸກເສີນນີ້.

6.3 - ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮັບຜິດຊອບຄຸ້ມຄອງ ຄັງແຮເຂົ້າສຳລັບການສົງເຄາະຊ່ວຍເຫລືອ ( ການເກັບມ້ຽນຮັກສາ; ການແຈກຢາຍ ແລະ ຈຳໜ່າຍເຂົ້າຕາມການອະນຸມັດ, ການບັນຊີ-ການເງິນ; ການດູແລຄຸນນະພາບເຂົ້າ; ການໝູນວຽນເຂົ້າ ) ຢ່າງມີການຮັບປະກັນໃຫ້ ສາມາດນຳໃຊ້ໄດ້ຕາມວັດຖຸປະສົງທີ່ວາງໄວ້.

6.4 - ຄະນະກວດກາລັດຖະບານ ມີໜ້າທີ່ກວດກາ ກ່ຽວກັບການຈັດຊື້, ການແຈກຢາຍ ແລະ ການຈຳ ໜ່າຍໝູນວຽນເຂົ້າ ແລະ ຄຸນນະພາບເຂົ້າ ຖ້າເຫັນວ່າມີຄວາມຈຳເປັນ.

6.5 - ໃຫ້ມີການໝູນວຽນປ່ຽນເຂົ້າ ໂດຍອີງຕາມການເລັ່ງທວງຂອງສະພາບ ແລະ ປ່ຽນລະດູການ ເພື່ອບໍ່ໃຫ້ເຂົ້າ ເສື່ອມຄຸນ-ເສຍຫາຍ; ການໝູນວຽນປ່ຽນຖ່າຍເຂົ້າແຕ່ລະຄັ້ງ ຕ້ອງມີການຕິດຕາມ ກວດກາ ໂດຍຄະນະສະເພາະກິດທີ່ກ່ຽວຂ້ອງ.

ມາດຕາ 07 : ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນໃຈກາງປະສານກັບບັນດາກະຊວງ-ຂະແໜງການກ່ຽວຂ້ອງຂອງສູນກາງ ແລະ ອຳນາດການປົກຄອງທ້ອງຖິ່ນ ເພື່ອດຳເນີນ

ການສ້າງສາງແຮເຂົ້າໄວ້ແຊກແຊງຕະຫລາດ ແລະ ດັດສົມລາຄາໃຫ້ໄດ້ ໃນຈຳນວນ 8.000 (ແປດພັນ) ໂຕນ, ໂດຍໃຫ້ປະຕິບັດດັ່ງນີ້ :

7.1 - ໃຫ້ກວດກາ-ເລືອກເຟັ້ນເອົາບໍລິສັດສະບຽງຂອງລັດທີ່ຍັງເຄື່ອນໄຫວດີ ຢູ່ແຂວງຈຳນວນໜຶ່ງ ແລະ ນະຄອນຫລວງວຽງຈັນ ເພື່ອເປັນຫົວໜ່ວຍສ້າງສາງແຮເຂົ້າດັ່ງກ່າວ ໃຫ້ໄດ້ໃນຈຳນວນ 4000 (ສີ່ພັນ) ໂຕນ; ພ້ອມນັ້ນກໍ່ເລືອກເຟັ້ນເອົາຜູ້ປະກອບການໂຮງສີ ແລະ ຫົວໜ່ວຍທຸລະກິດຊື້-ຂາຍເຂົ້າ ເປັນຫົວໜ່ວຍສ້າງສາງແຮເຂົ້າດັ່ງກ່າວ ໃຫ້ໄດ້ຕື່ມອີກ ໃນຈຳນວນ 4.000 (ສີ່ພັນ) ໂຕນ.

7.2 - ເມື່ອໄດ້ກວດກາເລືອກເຟັ້ນຢ່າງເປັນເອກະພາບກັນແລ້ວ ຈຶ່ງເຮັດຂໍ້ຜູກພັນສັນຍາ ແລະ ອອກອະນຸຍາດໃຫ້ດຳເນີນການ ພາຍໃຕ້ການຄຸ້ມຄອງ-ອຳນວຍຄວບຄຸມຂອງພະແນກອຸດສາຫະກຳ ແລະ ການຄ້າ ແລະ ການນຳພາ-ຊີ້ນຳ ໂດຍກົງຂອງຄະນະພັກ-ອຳນາດການປົກຄອງ ແຂວງ, ນະຄອນຫລວງ.

7.3 - ບັນດາຫົວໜ່ວຍທີ່ແຮເຂົ້າ ເພື່ອແຊກແຊງຕະຫລາດ-ດັດສົມລາຄາ ທັງຂອງລັດ ແລະ ເອກະຊົນທີ່ໄດ້ເຊັນສັນຍາ ແລະ ໄດ້ຮັບອະນຸຍາດ ຕ້ອງເຄື່ອນໄຫວບົນພື້ນຖານຫລັກການໄລ່ລຽງທຸລະກິດ; ມີການຄຸ້ມຄອງດ້ວຍຕົນເອງ ແລະ ຮັບຜິດຊອບດ້ວຍຕົນເອງ, ໂດຍມີສິດພັນທະໜ້າທີ່ ແລະ ຜົນປະໂຫຍດດັ່ງນີ້ :

7.3.1- ມີສິດໄດ້ຮັບນະໂຍບາຍຊ່ວຍໜູນບາງດ້ານ ເຊັ່ນ : ໃຫ້ນຳໃຊ້ພື້ນຖານວັດຖຸ-ເຕັກນິກ (ສາງ, ລານຕາກ, ໂຮງສີ, ໂຮງອົບຂອງລັດ), ໄດ້ຮັບທຶນໝູນວຽນໃນເບື້ອງຕົ້ນ ແລະ/ຫຼື ສິນເຊື່ອຈາກທະນາຄານ; ໄດ້ຮັບການອຳນວຍເງື່ອນໄຂສຳລັບການເກັບຊື້ ແລະ ໝູນວຽນເຂົ້າ ໃຫ້ມີຄວາມຄ່ອງຕົວ...

7.3.2- ມີພັນທະໜ້າທີ່ປະຕິບັດຂໍ້ຜູກພັນສັນຍາກັບລັດຢ່າງເຂັ້ມງວດ ເປັນຕົ້ນແມ່ນ ການສະໜອງເຂົ້າເພື່ອແຊກແຊງຕະຫລາດ-ດັດສົມລາຄາໃນເວລາຈຳເປັນຕາມຈຳນວນ, ຄຸນນະພາບ ແລະ ລາຄາທີ່ຕົກລົງກັນ; ນຳໃຊ້ພື້ນຖານວັດຖຸເຕັກນິກ-ທຶນໝູນວຽນ ແລະ/ຫລື ສິນເຊື່ອທະນາຄານ ດ້ວຍຄວາມເປັນເຈົ້າການ ແລະ ມີຄວາມຮັບຜິດຊອບຂາດຕົວ ຕໍ່ຜົນການເຄື່ອນໄຫວຂອງຕົນ, ໃຊ້ແທນຄືນຕົ້ນທຶນ ແລະ ດອກເບ້ຍເງິນກູ້ຕາມລະບຽບການ ໂດຍທີ່ລັດຈະບໍ່ເກື້ອກູນ-ຊ່ວຍໝູນ (ນອກຈາກກໍລະນີເຫດສຸດວິໄສເທົ່ານັ້ນ).

7.3.3- ຜູ້ປະກອບການສາງແຮເຂົ້າ ເພື່ອແຊກແຊງດັດສົມ ນອກຈາກຈະໄດ້ຮັບຜົນປະໂຫຍດຈາກການເຄື່ອນໄຫວທຸລະກິດຂອງຕົນແລ້ວ ຍັງຈະໄດ້ຮັບຜົນປະໂຫຍດຈາກການຍົກເວັ້ນ ຫລື ຫລຸດຜ່ອນການເສຍພັນທະບາງຢ່າງ ຕາມການຕົກລົງຂອງລັດຖະບານ.

7.4- ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ກຳນົດ ແລະ ຕົກລົງ ກ່ຽວກັບຈຳນວນຫົວໜ່ວຍ ປະກອບການສາງແຮເຂົ້າ ເພື່ອແຊກແຊງ-ດັດສົມ ຕາມທີ່ເຫັນເໝາະສົມ; ຫລີກເວັ້ນການເຮັດແບບລາມປາມ ແລະ ການເກື້ອກູນ, ໃຫ້ຖືສຳຄັນຄວາມສາມາດໃນການດຳເນີນທຸລະກິດ ແລະ ປະສິດທິຜົນທາງເສດຖະກິດ-ສັງຄົມ.

7.5- ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບທະນາຄານ ແຫ່ງ ສປປ ລາວ ເພື່ອຄົ້ນຄ້ວາກຳນົດເປົ້າໝາຍສະໜັບສະໜູນດ້ານສິນເຊື່ອ ຈາກທະນາຄານ, ລວມທັງອັດຕາ

ດອກເບ້ຍ ແລະ ໄລຍະເວລາກູ້ຢືມ ເພື່ອໃຫ້ຫົວໜ່ວຍຜູ້ປະກອບການ ສາມາດດຳເນີນງານເປັນກຳລັງຊ່ວຍໝູນ ສ້າງສາງແຮເຂົ້າ ເພື່ອແຊກແຊງ-ດັດສົມໄດ້ຢ່າງແທ້ຈິງ.

7.6- ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າອອກລະບຽບການຄຸ້ມຄອງຫົວໜ່ວຍປະກອບການສາງແຮເຂົ້າ ເພື່ອແຊກແຊງ-ດັດສົມນີ້; ລວມທັງລະບຽບການ ແລະ ກົນໄກການ ຊື້-ຂາຍ ໝູນວຽນເຂົ້າ ເພື່ອບໍ່ໃຫ້ເຂົ້າຕົກຄ້າງເນົ່າເປື່ອຍ ຫລື ເສຍຄຸນ ໂດຍຮັບປະກັນຄວາມຄ່ອງຕົວໃນການເຄື່ອນໄຫວ ແລະ ຄວາມໂປ່ງໃສໃນການດຳເນີນງານ, ເຮັດໃຫ້ຫົວໜ່ວຍຜູ້ປະກອບການສາງແຮດັ່ງກ່າວເຕີບໃຫຍ່-ເຂັ້ມແຂງ ແລະ ສາມາດດຳເນີນການໄດ້ຢ່າງຕໍ່ເນື່ອງຍືນຍົງ.

7.7- ໃຫ້ກະຊວງກະສິກຳ-ປ່າໄມ້ເປັນເຈົ້າການປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນອື່ນໆ ຄົ້ນຄວ້າ ກ່ຽວກັບການສົ່ງເສີມການຜະລິດເຂົ້າ ແລະ ແນວພັນເຂົ້າ ເປັນສິນຄ້າ ຕາມຮູບແບບຜູກພັນ ສອງສົ້ນ (ຫລື Contract farming ) ລະຫວ່າງ ຫົວໜ່ວຍຜູ້ປະກອບສາງແຮເຂົ້າ ເພື່ອແຊກແຊງ-ດັດສົມນີ້ ກັບຜູ້ຜະລິດ; ສົ່ງເສີມໃຫ້ເກີດ ກຸ່ມຫົວໜ່ວຍບໍລິການ ຊຶ່ງຈະກໍ່ໃຫ້ເກີດສະຫະກອນ ໃນຂັ້ນຕໍ່ໄປ. ພ້ອມກັນນີ້ ກໍໃຫ້ຄົ້ນຄວ້ານະໂຍບາຍສົ່ງເສີມການລົງທຶນ ຫລື ຮ່ວມມືກັບຕ່າງປະເທດ ເພື່ອຜະລິດເຂົ້າ, ສຳລັບການສົ່ງອອກຂາຍຕ່າງປະເທດ.

ມາດຕາ 8 : ໃຫ້ກຳລັງປະກອບອາວຸດ ປກຊ-ປກສ ສືບຕໍ່ເກັບຊື້ເຂົ້າ ເພື່ອແຮຮອງໄວ້ຕອບສະໜອງຄວາມຕ້ອງການຂອງກຳລັງຢ່າງພຽງພໍ ຕາມທີ່ເຄີຍໄດ້ປະຕິບັດຜ່ານມາ.

ມາດຕາ 9 : ໃຫ້ບັນດາກະຊວງ, ອົງການ-ຂະແໜງການລັດຖະບານ ຊີ້ນຳພະແນກການສາຍຕັ້ງຂອງຕົນ ເພີ່ມທະວີຄວາມເອົາໃຈໃສ່, ໃຫ້ການປະສານສົມທົບຮ່ວມໄມ້ຮ່ວມ ມືກັບອຳນາດການປົກຄອງທ້ອງຖິ່ນ ໃນການຊຸກຍູ້ການຜະລິດເຂົ້າຕາມນະໂຍບາຍ ແລະ ມາດຕະການສົ່ງເສີມຕ່າງໆຂອງລັດຖະບານ, ແນໃສ່ເຮັດໃຫ້ການ ຜະລິດເຂົ້າຢູ່ປະເທດມີສະຖຽນລະພາບ ແລະ ມີປະລິມານເພີ່ມຂຶ້ນ, ໃຫ້ປະຊາຊົນມີສ່ວນສະສົມ ແລະ ມີສ່ວນເຫລືອຂາຍເປັນສິນຄ້າ ຫລາຍຂຶ້ນ.

ມາດຕາ 10 : ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບບັນດາກະຊວງ-ອົງການກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບການສ້າງສາງແຮແຫ່ງຊາດ ຊຶ່ງລວມທັງການແຮເຂົ້າ ແລະ ວັດຖຸປັດໄຈອື່ນ ທີ່ຈຳເປັນຕ້ອງມີແຮຮອງໄວ້.

ມາດຕາ 11 : ບັນດາກະຊວງ, ອົງການທຽບເທົ່າອ້ອມຂ້າງສູນກາງ, ອຳນາດການປົກຄອງ ທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຕົນຢ່າງເຂັ້ມງວດ.

ມາດຕາ 12 : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ